ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງວຽງຈັນ

ພະແນກອຸດສາຫະກຳ ແລະ ການຄ້າ

ເລກທີ 0625/ອຄ.ນວ.ຄພນ

ລົງວັນທີ 24 ມີນາ 2015

## ແຈ້ງການ

ເຖິງ : - ທ່ານຫົວໜ້າຫ້ອງການອຸດສາຫະກຳ ແລະ ການຄ້າ ປະຈຳ 9 ຕົວເມືອງ.

- ຄະນະຈັດສັນຕະຫຼາດຢູ່ໃນນະຄອນຫຼວງວຽງຈັນ.
- ຜູ້ປະກອບການທຸລະກິດຊາວຄ້າຂາຍຢູ່ໃນນະຄອນຫຼວງວຽງຈັນ

ເລື່ອງ : ຫ້າມສວຍໂອກາດຂຶ້ນລາຄາສິນຄ້າຕາມລຳພັງໃຈ ແລະ ໃຫ້ຕິດລາຄາສິນຄ້າເປັນເງິນກີບ.

- ອີງຕາມ ດຳລັດ ວ່າດ້ວຍການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ສະບັບເລກທີ 474 /ນຍ, ລົງວັນທີ 18 ພະຈິກ 2010 .
- ອີງຕາມ ແຈ້ງການ ວ່າດ້ວຍການກຳນົດລາຄາຊີ້ນໝູຢູ່ນະຄອນຫຼວງວຽງຈັນ, ສະບັບເລກທີ 0815 / ອຄ.ນວ, ລົງວັນທີ 29 ເມສາ 2014.
- ອີງຕາມ ແຈ້ງການວ່າດ້ວຍການກຳນົດລາຄາຊື້-ຂາຍປາກະຊັງ ( ປານິນ ) ຢູ່ພາຍໃນນະຄອນຫຼວງວຽງຈັນ ສະບັບເລກທີ 0087/ອຄ.ນວ, ລົງວັນທີ 17 ມັງກອນ 2013.

ເພື່ອເຮັດໃຫ້ບຸນປີໃໝ່ລາວ ພສ 2558 ທີ່ຈະໝູນວຽນມາເຖິງອີກວາລະໜຶ່ງ ໃຫ້ມີຄວາມເປັນລະບຽບຮຽບຮ້ອຍ, ເຮັດໃຫ້ການສະເຫຼີມສະຫຼອງງານບຸນປະເພນີລາວໃຫ້ມີຄວາມໝາຍຄວາມສຳຄັນ, ທັງເປັນການອະນຸລັກຮີດຄອງປະເພນີອັນດີງາມຂອງຊາດ ຕິດພັນກັບການຊົມໃຊ້ສິນຄ້າລາຄາຍຸດຕິທຳບົນພື້ນຖານກົນໄກຕະຫຼາດທີ່ມີການຄຸ້ມຄອງຂອງລັດ, ຫຼີກລ້ຽງການເອົາລັດເອົາປຽບລາຄາລະຫວ່າງຜູ້ຂາຍ-ຜູ້ຊື້ ແລະ ທັງຮັບປະກັນໃຫ້ທົ່ວສັງຄົມມີຄວາມສະຫງົບ.

**ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງວຽງຈັນ ອອກແຈ້ງການດັ່ງນີ້:**

1. ໃຫ້ໜ່ວຍງານກວດກາການຄ້າ, ຈຸງານກວດກາການຄ້າປະຈຳແຕ່ລະເມືອງເອົາໃຈໃສ່ຕິດຕາມກວດກາລາຄາສິນຄ້າ ທີ່ມີຜົນກະທົບໄວຕໍ່ຊີວິດການເປັນຢູ່ຂອງປະຊາຊົນ, ພະນັກງານ, ທະຫານ-ຕຳຫຼວດ, ໂດຍສະເພາະແມ່ນສິນຄ້າທີ່ລັດຄຸ້ມຄອງລາຄາບໍ່ໃຫ້ມີປະກົດການສິນຄ້າຂາດຕະຫຼາດ, ການສວຍໂອກາດກັກຕຸນສິນຄ້າເພື່ອຂຶ້ນລາຄາຂອງບຸກຄົນ ຫຼື ກຸ່ມຄົນບໍ່ຫວັງດີ ໃນຊ່ວງປີໃໝ່ຢ່າງເດັດຂາດ.
2. ໃຫ້ຜູ້ປະກອບການທຸລະກິດຊາວຄ້າຂາຍນຳສິນຄ້າຂອງຕົນອອກມາຈຳໜ່າຍເປັນປົກກະຕິຢູ່ໃນທ້ອງຕະຫຼາດ , ຖ້າມີການຫຼິ້ນບຸນປີໃໝ່ກໍ່ໃຫ້ມີການແບ່ງໜ້າທີ່ຜູ້ພັກ, ຜູ້ມາຂາຍ.
3. ໃຫ້ທຸລະກິດຈຳໜ່າຍສິນຄ້າປະເພດເຂົ້າ, ຊີ້ນ ( ງົວ, ຄວາຍ, ໝູ ), ປາ, ເປັດ-ໄກ່, ໄຂ່ ແລະ ອື່ນໆ ຕິດລາຄາສິນຄ້າເປັນເງິນກີບໃສ່ບ່ອນທີ່ສາມາດເຫັນໄດ້ສະດວກ, ມີຄວາມຊັດເຈນ ແລະ ສິນຄ້າປະເພດຄວບຄຸມຕ້ອງຕິດລາຄາຕາມແຈ້ງການທີ່ລັດປະກາດໃຊ້ຄື : ຊີ້ນງົວ-ຄວາຍ ປະເພດ1 ສູງສຸດບໍ່ໃຫ້ເກີນ 75.000 ກີບ/ກິໂລ, ຊີ້ນໝູປະເພດ1 ສູງສຸດບໍ່ໃຫ້ເກີນ 38.500 ກີບ/ກິໂລ, ປານິນກະຊັງ ສູງສຸດບໍ່ໃຫ້ເກີນ 23.000 ກີບ/ກິໂລ, ພ້ອມທັງເຮັດຢ່າງຕໍ່ເນື່ອງ.

4. ໃນເວລາພະນັກງານລົງກວດກາຕົວຈິງຫາກພົບເຫັນຫົວໜ່ວຍທຸລະກິດໃດລະເມີດໂດຍເຈດຕະນາ ແລະ ບໍ່ເຈດຕະນາ ຈະໃຊ້ມາດຕະການສຶກສາອົບຮົມ, ປັບໃໝ ຫຼື ຍຶດສິນຄ້າ ຕາມແຕ່ກໍລະນີໜັກ ຫຼື ເບົາ.
5. ມອບໃຫ້ຂະແໜງການຄ້າພາຍໃນ ແລະ ຫ້ອງການອຸດສາຫະກໍາ ແລະ ການຄ້າເມືອງ ແຕ່ງຕັ້ງພະນັກງານລົງຕິດຕາມກວດກາສະພາບການຈໍາໜ່າຍ, ການເໜັງຕີງລາຄາສິນຄ້າ, ການຕິດລາຄາສິນຄ້າຢ່າງເຂັ້ມງວດ, ພ້ອມທັງລາຍງານຜົນການຈັດຕັ້ງປະຕິບັດໃຫ້ຄະນະພະແນກອຸດສາຫະກໍາ ແລະ ການຄ້າ ເປັນແຕ່ລະໄລຍະ.

ດັ່ງນັ້ນ, ຈິ່ງໄດ້ແຈ້ງການມາຍັງທ່ານເພື່ອຊາບ ແລະ ນໍາເອົາເນື້ອໃນແຈ້ງການສະບັບນີ້ໄປຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ຫົວໜ້າພະແນກອຸດສາຫະກໍາ ແລະ ການຄ້າ

ເປີລົມ ເພັດຈັນທະຣາດ

<u>ໝາຍເຫດ</u>: ໂທສອບຖາມ

- ຂະແໜງການຄ້າພາຍໃນ ໂທ:0305706945
- ຫ້ອງການອຸດສາຫະກໍາແລະຄ້າເມືອງ9ຕົວເມືອງ:
  ຈັນທະບູລີ ໂທ:021217063,ສີໂຄດຕະບອງ ໂທ:021613100
  ໄຊເສດຖາ ໂທ:021261520,ສີສັດຕະນາກ ໂທ:021312453
  ໄຊທານີ ໂທ:021732345,ຫາດຊາຍຟອງ ໂທ:021832174
  ນາຊາຍທອງ ໂທ:021633012,ປາກງື່ມ ໂທ:021980104
  ສັງທອງ ໂທ:021673013

<u>ບ່ອນສົ່ງ</u>

-ກົມການຄ້າພາຍໃນ ກະຊວງ ອຄ 1 ສະບັບ (ເພື່ອລາຍງານ )
-ຫ້ອງວ່າການປົກຄອງນະຄອນຫຼວງ 1 ສະບັບ ( ເພື່ອລາຍງານ )
-ຫ້ອງການອຸດສາຫະກໍາ ແລະ ການຄ້າເມືອງ 09 ຕົວເມືອງ (ເພື່ອປະຕິບັດ).
-ຂະແໜງການຄ້າພາຍໃນ 1 ສະບັບ ( ເພື່ອປະຕິບັດ )
-ຄະນະຈັດສັນຕະຫຼາດໃນທົ່ວນະຄອນຫຼວງ 1 ສະບັບ ( ເພື່ອປະຕິບັດ )
-ສໍາເນົາ 01 ສະບັບ.